**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ກະຊວງສາທາລະນະສຸກ

ກົມອາຫານ ແລະ ຢາ

ເລກທີ 1446 /2025.ກອຢ

ນະຄອນຫຼວງວຽງຈັນ, ວັນທີ 03 APR 2025

## ໜັງສືແຈ້ງການ

ເຖິງ: ທ່ານຫົວໜ້າກອງກວດກາອາຫານ ແລະ ຢາ..................................

**ເລື່ອງ: ການນຳໃຊ້ໃບຢັ້ງຢືນການຈົດແຈ້ງຜະລິດຕະພັນເຄື່ອງສຳອາງ ໃນຮູບແບບໃໝ່** ດ້ວຍການເພີ່ມ **QR Code.**

- ອີງຕາມ ຂໍ້ຕົກລົງວ່າດ້ວຍການຄຸ້ມຄອງຜະລິດຕະພັນເຄື່ອງສຳອາງ ເລກທີ 1626/ ສທ, ລົງວັນທີ 21 ກໍລະກົດ 2023.

ກົມອາຫານ ແລະ ຢາ, ກະຊວງສາທາລະນະສຸກ ຂໍຖືເປັນກຽດແຈ້ງມາຍັງທ່ານໄດ້ຮັບຊາບວ່າ: ຜ່ານການຈັດຕັ້ງປະຕິບັດກ່ຽວກັບວຽກງານຄຸ້ມຄອງເຄື່ອງສຳອາງໃນໄລຍະທີ່ຜ່ານມາ ຕໍ່ກັບການລະບຸຂໍ້ມູນລາຍລະອຽດຂອງຜະລິດຕະພັນເຄື່ອງສຳອາງ ຢູ່ໃນໃບຢັ້ງຢືນການຈົດແຈ້ງ ແມ່ນຍັງບໍ່ທັນຕອບສະໜອງກັບຄວາມຮຽກຮ້ອງຕ້ອງການໃນສະພາບປັດຈຸບັນໄດ້ເທົ່າທີ່ຄວນ.

ເຫັນໄດ້ຄວາມສຳຄັນຂອງວຽກງານດັ່ງກ່າວ, ຈຶ່ງໄດ້ຄົ້ນຄວ້າ ແລະ ພັດທະນາລະບົບຂຶ້ນມາເພື່ອອຳນວຍຄວາມສະດວກໃຫ້ແກ່ວຽກງານຄຸ້ມຄອງເຄື່ອງສຳອາງ ມີຂໍ້ມູນທີ່ຖືກຕ້ອງ, ຄົບຖ້ວນ, ວ່ອງໄວ ແລະ ເຂົ້າເຖິງໄດ້ຕະຫຼອດເວລາ ເພື່ອອຳນວຍຄວາມສະດວກໃຫ້ແກ່ເຈົ້າໜ້າທີ່ພາກລັດ, ຜູ້ປະກອບການ ແລະ ຜູ້ບໍລິໂພກໃນສັງຄົມ ສາມາດເລືອກຊື້ ແລະ ຊົມໃຊ້ຜະລິດຕະພັນເຄື່ອງສຳອາງ ໃຫ້ມີຄວາມປອດໄພ **ໂດຍການເພີ່ມ QR Code ເຂົ້າໃນໃບຢັ້ງຢືນການຈົດແຈ້ງຜະລິດຕະພັນເຄື່ອງສຳອາງ** ມີລາຍລະອຽດ ດັ່ງນີ້:

1. ຖ້າສະແກນ QR Code ຈະພົບຂໍ້ມູນຄົບຖ້ວນ ເຊັ່ນ: ເລກທີ, ວັນ/ເດືອນ/ປີ ໝົດອາຍຸ, ຍີ່ຫໍ້, ຊື່ຜະລິດຕະພັນ, ປະລິມານຜະລິດຕະພັນຮ່ວມ, ລະຫັດສິນຄ້າ, ຊື່ໂຮງງານຜະລິດ, ຊື່ບໍລິສັດນຳເຂົ້າ, ທີ່ຕັ້ງສຳນັກງານ, ເບີໂທລະສັບ ແລະ ຮູບພາບຂອງຜະລິດຕະພັນ;
2. ສຳລັບ QR Code ສາມາດນຳໃຊ້ໄດ້ໂດຍບໍ່ມີຄ່າໃຊ້ຈ່າຍໃດໆ, ບໍ່ມີວັນໝົດອາຍຸ ແລະ ບໍ່ຈຳກັດຈຳນວນທີ່ນຳໃຊ້;
3. ການເພີ່ມ QR Code ເຂົ້າໃນໃບຢັ້ງຢືນການຈົດແຈ້ງຜະລິດຕະພັນເຄື່ອງສຳອາງ ຈະເລີ່ມຈັດຕັ້ງປະຕິບັດນັບຕັ້ງແຕ່ ວັນທີ 01 ເມສາ 2025 ເປັນຕົ້ນໄປ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານເພື່ອຊາບ ແລະ ເປັນບ່ອນອີງໃນການຈັດຕັ້ງປະຕິບັດດ້ວຍ.

**ຫົວໜ້າກົມ**

ປອ. ດຣ. ບຸນຮູ ແກ້ວທາວົງ

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**
**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ກະຊວງສາທາລະນະສຸກ
ກົມອາຫານ ແລະ ຢາ ເລກທີ /2025.ກອຢ

ນະຄອນຫລວງວຽງຈັນ, ວັນທີ

# ໃບຢັ້ງຢືນການຈົດແຈ້ງຜະລິດຕະພັນເຄື່ອງສຳອາງ

***Certificate of Cosmetic Product Notification***

| **ລ/ດ** No. | **ຊື່ຜະລິດຕະພັນ** (Product Name) | **ເລກທີຈົດແຈ້ງ** (Cosmetic Notification Number) | **ຜະລິດຕະພັນຍ່ອຍ** (Variant/s) | **ວັນໝົດອາຍຸຈົດແຈ້ງ** (Validity) | **ຮູບຜະລິດຕະພັນ** (QR Code) |
|---|---|---|---|---|---|
| 1 | | | | | |

ຍີ່ຫໍ້ (Brand Name):
ລະຫັດສິນຄ້າ (HS Code):
ຜະລິດໂດຍ (Manufactured by):
ບໍລິສັດນຳເຂົ້າ (Imported by):
ທີ່ຕັ້ງສຳນັກງານ (Address):
ໂທລະສັບ (Telephone number):

**ໝາຍເຫດ:**

- ຫ້າມນຳໃບຢັ້ງຢືນການ**ຈົດແຈ້ງ**ຜະລິດຕະພັນ**ເຄື່ອງສຳອາງເພື່ອ**ໄປໂຄສະນາໂດຍ**ບໍ່**ໄດ້**ຮັບ**ອະນຸຍາດ**ໃນທຸກ**ຮູບແບບ;
- ໃບອະນຸຍາດຈົດແຈ້ງອາດຖືກລຶບລ້າງ, ຖ້າຫາກພົບເຫັນວ່າຜະລິດຕະພັນດັ່ງກ່າວບໍ່ມີຄຸນນະພາບ ແລະ ບໍ່ປອດໄພແກ່ຜູ້ຊົມໃຊ້ຕາມທີ່ ໄດ້ຈົດແຈ້ງໄວ້;
- ກ່ອນມື້ໝົດອາຍຸ 90 ວັນ ເຈົ້າຂອງຜະລິດຕະພັນຕ້ອງໄດ້ຍື່ນໜັງສືສະເໜີເພື່ອຂໍຕໍ່ຈົດແຈ້ງ ແລະ ຖ້າຫາກບໍ່ປະຕິບັດການຕໍ່ຈົດແຈ້ງ ໃບອະນຸຍາດຈົດແຈ້ງສະບັບນີ້ແມ່ນຖືກລຶບລ້າງ.

**ຫົວໜ້າກົມ**

# ລາຍລະອຽດໃບຈົດແຈ້ງຜະລິດຕະພັນເຄື່ອງສຳອາງ

***Certificate of Cosmetic Product Notification***

ເລກທີຈົດແຈ້ງ (Cosmetic Notification Number):

ວັນໝົດອາຍຸຈົດແຈ້ງ (Validity):

ຍີ່ຫໍ້ (Brand Name):

ຊື່ຜະລິດຕະພັນ (Product Name):

ຜະລິດຕະພັນຮ່ວມ (Variant/s):

ລະຫັດສິນຄ້າ (HS Code):

ຜະລິດໂດຍ (Manufactured by):

ບໍລິສັດນຳເຂົ້າ (Imported by):

ທີ່ຕັ້ງສຳນັກງານ (Address):

ເບີໂທລະສັບ (Telephone number):

